# ນາງ ພາວະດີ

## ແມ່ຍິງລາວຕົວຢ່າງ

ນິຍາຍ ແຕ່ງເປັນພາສາລາວ ທີ່ເຂົ້າໃຈງ່າຍ

ໂດຍ ສົມຈິນ ງິນ

(ພ້ອມດ້ວຍ ຊີວະປວັດຂອງຜູ້ແຕ່ງ)

ພິມຄັ້ງທີ່ນຶ່ງ ໓.໐໐໐ ສະບັບ

# NANG PHAVADY,

## *LA FEMME LAO MODELE*

- Nouvelle Laotienne -

par P. S. NGINN

*(avec biographie de l'auteur)*


*Editions du Comité Littéraire*

**1ère édition 3.000 exemplaires.**



164/

## ນິຍາຍເລື່ອງ

## ນາງພາວະດີ

## ແມ່ຍິງລາວຕົວຢ່າງ

---

### ຫົວຂໍ້ເລື່ອງ


໑.– ສເນີຕົວນາງພາວະດີ — ໜ້າ ໑

໒.– ຜູ້ຍິງປຽບທຽບໃສ່ດອກໄມ້ — " ໒

໓.– ປະວັດຫຍໍ້ແລະຄຸນສົມບັດຂອງນາງພາວະດີ — " ໓

໔.– ຍາແມ່ປະຫຸນາເອົາຜົວໃໝ່ — " ໕

໕.– ນາງພາວະດີມີຄູ່ຄອງ — " ໖

໖.– ນາງພາວະດີເປັນແມ່ເຮືອນທີ່ດີ — " ໗

໗.– ການຮັບຕ້ອນ — " ໑໐

໘.– ນາງພາວະດີໄດ້ຮັບການສຶກສາພຽງເລັກນ້ອຍ — " ໑໑

໙.– ການສະມາຄົມກັບພໍ່ແມ່ຜົວແລະຍາດພີ່ນ້ອງຂອງຜົວ — " ໑໑

໑໐.– ການຄົບຫາສະມາຄົມກັບບຸກຄົນທົ່ວໄປ — " ໑໒

໑໑.– ນາງພາວະດີເປັນໂຣກເສັ້ນປະສາດ — " ໑໓

໑໒.– ໂຣກເສັ້ນປະສາດທະວີກຳລັງຂຶ້ນຢ່າງຮ້າຍແຮງ — " ໑໖

໑໓.– ນາງພາວະດີ, ຍິງຕົວຢ່າງ, ອາດເປັນຍອດຍິງໄດ້ — " ໑໗

໑໔.– ຂໍ້ຄວາມຕື່ມແຖມ — " ໑໘

໑໕.– ມ້ອນທ້າຍ — " ໒໒

໑໖ .– ຊີວະປະວັດຂອງຜູ້ແຕ່ງ ໜ້າ ກ

໑໗ .– ຕໍາແໜ່ງຣາຊການເປັນລໍາດັບ " ຄ

໑໘ .– ຮັບຣາຊການໃນຖານະທີ່ເປັນຂ້າຣາຊການເບັ້ງບໍານານຖືກ
ເກນ ໜ້າ ຈ

໑໙ .– ປະຈໍາຣາຊການ " ຂ

໒໐ .– ຫຼຽນອິສຣິຍາພອນ ທີ່ໄດ້ຮັບເປັນລໍາດັບມາ " ຍ

<u>ຄຳນຳ</u>

ຂ້າພະເຈົ້າໄດ້ແຕ່ງນິຍາຍເລື່ອງ "ນາງພາວະດີ" ນີ້ຂຶ້ນກໍເພາະວ່າຂ້າພະເຈົ້າຮູ້ຈັກນິດສັຍໃຈຄໍຂອງນາງເປັນຢ່າງດີ. ດ້ວຍເຫດໃດຂ້າພະເຈົ້າຈຶ່ງຮູ້ຈັກນິດສັຍແລະປະວັດການເປັນມາຂອງນາງ?
-ຂ້າພະເຈົ້າເປັນເພື່ອນສນິດສນົມຂອງທ້າວສົມໃຈ ສາມີຂອງນາງພາວະດີ. ຕັ້ງແຕ່ຍັງເປັນເດັກນ້ອຍຢູ່ ພວກຂ້າພະເຈົ້າສອງສະຫາຍເຄີຍຢູ່ເຮືອນຕິດກັນຄືຢູ່ຮ່ວມເຮືອນກໍວ່າໄດ້, ໄປຮຽນໜັງສືຢູ່ໂຮງຮຽນດຽວກັນ, ເປັນນັກສຶກສາທີ່ສະຖາບັນດຽວກັນ, ເຂົ້າທຳຣາຊການພ້ອມກັນ, ກິນດອງມື້ດຽວກັນ. ເມື່ອເຂົ້າພົບທ້າວສົມໃຈເທື່ອໃດ ຂ້າພະເຈົ້າກໍໄດ້ມີໂອກາດເວົ້າຈາສົນທະນາກັບນາງພາວະດີ. ນາງຜູ້ມີນິດສັຍຈົດຈຳສິ່ງຕ່າງໆທີ່ໄດ້ຜ່ານມາແລ້ວນັ້ນ ຈຶ່ງໄດ້ເລົ່າປະວັດຂອງນາງໃຫ້ຂ້າພະເຈົ້າຟັງຕັ້ງແຕ່ຍາມເປັນເດັກນ້ອຍຍາມເປັນສາວແລະຍາມຢູ່ເປັນຄູ່ຊີວິດຮ່ວມທຸກຮ່ວມສຸກກັບທ້າວ ສົມໃຈ.

ຂ້າພະເຈົ້ານຳເລື່ອງ "ນາງພາວະດີ" ນີ້ມາເລົ່າສູ່ທ່ານນັກອ່ານທັງຫຼາຍຟັງ ເພາະວ່າຂ້າພະເຈົ້າມີຄວາມປາຖນາອັນແຮງກ້າທີ່ຈະໃຫ້ບັນດາແມ່ຍິງລາວໃນລະຫວ່າງສາມັນຊົນມີກິຣິຍາຄ່ຽມຄົມສຸພາບຮຽບຮ້ອຍ, ເວົ້າຈາອ່ອນຫວານ, ຮູ້ຈັກຕ່ຳຈັກສູງ, ເປັນແມ່ເຮືອນທີ່ດີ, ຢູ່ດີກິນດີ, ປະພຶດຕົນໃນທາງທີ່ຊອບ ແລະຂໍ້ສຳຄັນທີ່ສຸດກໍຄືໃຫ້ມີສົນທັນປະຈຳໃຈທຸກຖ້ວນໜ້າ. ຄຸນສົມບັດ~~ເຫຼົ່າ~~ນີ້ເປັນສເນ

ເຫຼົ່າ

ທານພາບຂອງຍິງທີ່ຊັກຊວນໃຫ້ຄົນທັງຫຼາຍນິຍົມຊົມຊອບ ເຖິງວ່າຍິງຜູ້ນັ້ນຫາກມີຮູບຮ່າງເອີຮ້າຍກໍຕາມ. ຮວມຄວາມວ່າຂໍໃຫ້ແມ່ຍິງລາວຜູ້ຕ້ອງການເປັນຄົນດີນັ້ນຈົ່ງພຍາຍາມເອົາແບບຢ່າງຂອງຍິງຜູ້ເປັນວິຣະສັຕຣີໃນເຣື່ອງທີ່ທ່ານຈະອ່ານຕໍ່ໄປນີ້.

ເພື່ອປ້ອງກັນຄວາມເຂົ້າໃຈຜິດ ຂ້າພະເຈົ້າຂໍໃຫ້ທ່ານຜູ້ອ່ານສັງເກດແລະຫາຄວາມເຂົ້າໃຈປໂຍກນຶ່ງໃນນິຍາຍທີ່ວ່າ: "ສົມຄວນແລ້ວທີ່ຈະຍົກນາງຂຶ້ນເປັນຍອດຍິງລາວ ແລະ ເປັນແມ່ຍິງຕົວຢ່າງສຳລັບຊາວລາວທົ່ວໄປໃນຈຳພວກສາມັນຊົນ." ຂ້າພະເຈົ້າບໍ່ໝາຍຄວາມວ່ານາງພາວະດີເປັນຍິງດີກວ່າຜູ້ຍິງລາວອື່ນໆທັງຊາດ. ຂ້າພະເຈົ້າຕັ້ງຕົ້ນກ່າວວ່ານາງພາວະດີບໍ່ເປັນເຊື້ອກະສັດ ບໍ່ເປັນເຊື້ອສາຍມະຫາເສດຖີ, ເພາະສະນັ້ນຂ້າພະເຈົ້າບໍ່ໄດ້ທຽບໃສ່ເຊື້ອເຈົ້າແນວນາຍເລີຍ; ຂ້າພະເຈົ້າທຽບໃສ່ຄົນສາມັນທັມມະດາ ແຕ່ກໍບໍ່ໝາຍຄວາມວ່ານາງພາວະດີເປັນຜູ້ດີເລີດໝູ່; ສະນັ້ນຂໍໃຫ້ທ່ານຜູ້ອ່ານຈົ່ງເຂົ້າໃຈຄວາມໝາຍອັນແທ້ຈິງຂອງຂ້າພະເຈົ້າດັ່ງຕໍ່ໄປນີ້: "ສົມຄວນແລ້ວທີ່ຈະຍົກນາງຂຶ້ນເປັນຍອດຍິງລາວແລະເປັນຍິງລາວຕົວຢ່າງຜູ້ນຶ່ງ. ແຕ່ໃນຈຳນວນແມ່ຍິງສາມັນຊົນນັ້ນອາດມີຜູ້ອື່ນທີ່ສົມຄວນເປັນຍອດຍິງລາວ ແລະ ເປັນແມ່ຍິງລາວຕົວຢ່າງດັ່ງດຽວກັບຫຼືດີ່ລື່ນນັ້ນອີກກໍເປັນໄດ້."

ວຽງຈັນ, ວັນທີ່ ໑໕ ຕຸລາ ໑໙໗

ສິນຈິນງິນ.

ແຕ່ງ ແລະ ຖອດ ໂດຍທ່ານສິນຈິນ ງິນ

ຜູ້ພິມ ທ້າວ ອ່ອນຈັນ ຈັນສ[illegible]ວັດ

# ນາງພາວະດີ

## ແມ່ຍິງລາວຕົວຢ່າງ

### ສເນີຕົວນາງພາວະດີ

ຍິງທີ່ມີຊື່ວ່ານາງພາວະດີນີ້ ເກີດມາໃນສະກຸນໃດ ຢູ່ບ້ານໃດ ເມືອງໃດນັ້ນ ຂ້າພະເຈົ້າຂໍອຳໄວ້ເປັນຄວາມລັບ ຂ້າພະເຈົ້າຂໍແຂໃຫ້ທ່ານຜູ້ອ່ານຮູ້ພຽງແຕ່ວ່ານາງຄົນນີ້ເປັນຄົນລາວ ພໍ່ແມ່ບໍ່ແມ່ນເຊື້ອກະສັດ ບໍ່ແມ່ນມະຫາເສດຖີ ພຽງແຕ່ເປັນໄພ່ຟ້າຂ້າແຜ່ນດິນທີ່ມີພໍ່ຢູ່ພໍ່ກິນ ຊຶ່ງເຂົາເອີ້ນກັນວ່າຊັ້ນກະດຸມພີ. ຮູບຮ່າງຂອງນາງ: ເປັນຄົນຕ່ຳເກິ່ງຜິວດອກສະເດື່ອ ຂ້ອນຂ້າງອ້ວນ ກິລິຍາທ່າທາງຄ່ຽມຄົມ ສລາດສລຽວມາແຕ່ນ້ອຍ ຮູ້ຈັກຕ່ຳຈັກສູງ ສະແດງຄວາມໂຄຣົບນົບນ້ອມຕໍ່ບຸກຄົນທຸກຊັ້ນທີ່ມີໂອກາດຄົບຫາສະມາຄົມກັບນາງ, ທັງຜູ້ໃຫຍ່ແລະຜູ້ນ້ອຍ. ສ່ວນຮູບໂສມຕະໂນມພັນຂອງນາງນັ້ນ ຈະວ່າເປັນຜູ້ສວຍງາມກໍບໍ່ແມ່ນ ຈະວ່າເປັນຜູ້ຂີ້ຮ້າຍກໍບໍ່ແມ່ນ ເປັນຜູ້ມີຮູບພັນສັນຖານພໍເບິ່ງພໍແຍງ ແລະຂໍ້ສຳຄັນທີ່ສຸດນັ້ນກໍຄື ນາງຄົນນີ້ເປັນຜູ້ມີສິນທັມປະຈຳໃຈ.

× ×

×

## ຜູ້ຍິງປຽບທຽບໃສ່ດອກໄມ້

ຄວາມສວຍງາມຂອງມະນຸດນັ້ນບໍ່ສູ້ສຳຄັນທີ່ໃດ ຖ້າຫາກວ່າປາສຈາກຄຸນທັມປະຈຳໃຈ. ຜູ້ທີ່ມີຮູບຮ່າງສວຍງາມແຕ່ຂາດສີນທັມຈະສູ້ຄົນທີ່ປະກອບຄຸນທັມແຕ່ມີຮູບຮ່າງຂີ້ຮ້າຍນັ້ນບໍ່ໄດ້. ຖ້າຫາກມີໃຈຮ້າຍຂາດ ກໍບໍ່ມີໃຜພໍໃຈຈະສະມາຄົມນຳ, ເຖິງຈະມີຮູບຮ່າງສວຍງາມປານໃດກໍຕາມ. ມະນຸດເກີດມາໃນໂລກນີ້ ມີຮູບພັນສັນຖານທີ່ເລືອກຕາມໃຈມັກບໍ່ໄດ້ ສຸດແລ້ວແຕ່ທັມມະຊາດຈະແຕ່ງມາ: ຜູ້ມີຮູບຮ່າງງາມກໍມີ ຜູ້ມີຮູບຮ່າງຂີ້ຮ້າຍກໍມີ. ຜູ້ໃດມີຮູບຮ່າງງາມກໍເປັນທີ່ນິຍົມແກ່ຜູ້ທີ່ໄດ້ພົບໄດ້ເຫັນ ເປັນເໝືອນດອກໄມ້ທີ່ມີສີສັນອັນງາມ; ຜູ້ໃດມີຮູບຮ່າງຂີ້ຮ້າຍ ກໍບໍ່ເປັນທີ່ຍົວະຍວນໃຈແກ່ຜູ້ເບິ່ງ, ເໝືອນດອກໄມ້ທີ່ບໍ່ງາມ. ຖ້າດອກໄມ້ຫາກມີທັງສີສັນອັນງາມ ມີທັງກິ່ນຫອມພ້ອມແລ້ວ ຍ່ອມເປັນທີ່ພໍໃຈແກ່ຄົນທັງຫຼາຍ. ຖ້າມີແຕ່ສີແລະສັນຖານງາມແຕ່ຫາກບໍ່ຫອມ ກໍບໍ່ທໍ່ດອກໄມ້ທີ່ມີກິ່ນຫອມ ແຕ່ບໍ່ງາມ. ຄົນເຮົາຜູ້ມີຮູບຮ່າງສວຍງາມແລະມີໃຈດີຍ່ອມເປັນທີ່ຊົມຊອບແກ່ປວງຊົນ. ດ້ວຍເຫດໃດນາງພາວະດີ ຈຶ່ງເປັນທີ່ນິຍົມຊົມຊອບແກ່ຜູ້ທີ່ໄດ້ພົບໄດ້ເຫັນ? ທ່ານຈະຮູ້ເຫດຜົນໂດຍອ່ານປວັດຕິຂອງນາງດັ່ງຈະບັນຍາຍຕໍ່ໄປນີ້:

× ×

×

## ປວັດຫຍໍ້ ແລະຄຸນສົມບັດຂອງ ນາງ ພາວະດີ

ນາງພາວະດີ ມີອ້າຍສອງຄົນຜູ້ນຶ່ງຊື່ວ່າທ້າວສານ ຜູ້ນຶ່ງອີກຊື່ວ່າທ້າວສຸວັນ; ເອື້ອຍຜູ້ນຶ່ງຊື່ວ່ານາງເຄນ ນ້ອງຊາຍສອງຄົນຄືທ້າວພົມມະດີແລະທ້າວນາກ. ຄອບຄົວນີ້ນັບຖືພຸທສາສນາຢ່າງເຄັ່ງຄັດເຂົ້າວັດຟັງທັມ ພ່ໍາເພັງພາວະນາທໍາບຸນທານພໍສົມຄວນຕາມຖານະຂອງຕົນ.

ເມື່ອນາງພາວະດີຢູ່ໃນວັຍໜຸ່ມ ບິດາຂອງນາງໄດ້ເຖິງແກ່ກັມໄປແຕ່ເມື່ອນາງອາຍຸໄດ້ ໑໔ ປີ ມາດາຜູ້ເປັນແມ່ໝ້າຍຊື່ວ່າຍາແມ່ປະທຸມາຈຶ່ງຕົກທຸກໄດ້ຍາກ, ເອົາໃຈໃສ່ໃຖນາຫາລ້ຽງລູກເຕົ້າ. ມື້ໃດຕ້ອງໄປນາ ນາງພາວະດີກໍລຸກແຕ່ເດິກເພື່ອໄປນານໍາແມ່, ໜຶ້ງເຂົ້າສຸກແລ້ວກໍຫາງເຄື່ອງ ແລະຫາບເຄື່ອງຍ່າງຕາມຫຼັງແມ່ໄປ. ມື້ໃດນ້ອງຊາຍໄປນໍາກໍຊ່ວຍແຂນນ້ອງ, ເມື່ອນ້ອງເມື່ອຍກໍຕ້ອງໄດ້ເຈັ້ຽງໄປທັງຫາບເຄື່ອງນໍາ, ບໍ່ມີຄວາມຈົ່ມວ່າປະການໃດເພາະເອົາໃຈແມ່, ຟັງຖ້ອຍທ້ອຍຄໍາວ່ານອນສອນງ່າຍ, ຊົດຊ່ວຍແມ່ບໍ່ໃຫ້ແມ່ຮ້ອນເຄືອງຢ່າງໃດເລີຍ.

ເຮືອນຂອງຍາແມ່ປະທຸມາກໍແມ່ນເຮືອນເສົາໄມ້ ພື້ນແປ້ນຝາໄມ້ເຮັ້ງ ມຸງຟ້າ ແຕ່ຫາກສະອາດດີ. ກ້ອງລ່າງກໍກ້ຽງຍ້ອນວ່ານາງພາວະດີ ພ້ອມດ້ວຍອ້າຍເອື້ອຍພາກັນກວາດແພ້ວ, ເດີ່ນບ້ານກໍແປນດີບໍ່ຮົກເຮື້ອ ເພາະເຂົາເຈົ້າພາກັນຖາກຖາງ ແລະປັດກວາດ

ຢູ່ທຸກວັນ. ສ່ວນເຫີງເຮືອນນັ້ນແມ່ນນາງພາວະດີເອງເປັນຜູ້ມັຽນນັດ ເອົາຂອງໄວ້ເປັນບ່ອນເປັນທີ່ ຂອງອັນໃດຢູ່ບ່ອນໃດກໍເອົາໄວ້ບ່ອນຫັ້ນສເມີ ເມື່ອເອົາໄປໃຊ້ແລ້ວກໍເອົາຄືນມາໄວ້ ຢູ່ບ່ອນເກົ່າເພື່ອໃຫ້ເປັນລະບຽບຮຽບຮ້ອຍຢູ່ເປັນນິດ. ເມື່ອເປັນດັ່ງນີ້ເອົາຕ້ອງການສິ່ງໃດກໍຫາໄດ້ໂດຍງ່າຍ ບໍ່ຈຳເປັນຕ້ອງຊອກຄົ້ນຫາໃຫ້ເສັຽເວລາ. ນອກຈາກວຽກເຫຼົ່ານີ້ແລ້ວມື້ໃດບໍ່ໄດ້ໄປນານາງກໍໄປຕັກບາດຢາດນ້ຳ ໄປຟັ່ງທັນໄປເພນແລະຮ່ວມໃນການທຳບຸນທຳທານຢູ່ບໍ່ຂາດ. ເຖິງວ່ານາງຍັງນ້ອຍຢູ່ກໍດີ ນາງເປັນຜູ້ຈັດວຽກບ້ານການເຮືອນຊ່ອຍແມ່ ສະນັ້ນນາງຈຶ່ງບໍ່ໄດ້ໄປຮ່ຳຮຽນແລະບໍ່ຮູ້ໜັງສື; ນີ້ແຫຼະເປັນໜ້າເສັຽດາຍທີ່ສຸດ ຖ້ານາງຫາກໄດ້ໄປໂຮງຮຽນມີຄວາມຮູ້ເໝືອນບັນດານາງສາວສມັຍນີ້ ນາງຄົງມີຄຸນສົມບັດອັນດີເລີດ.

ມື້ໜຶ່ງນາງພາວະດີ ບໍ່ໄດ້ໄປນານຳແມ່ ເພາະວ່າທ້າວພີມມະດີຜູ້ນ້ອງຊາຍເປັນໄຂ້. ນ້ອງຊາຍຈົ່ມເຈັບຫົວ ຈຶ່ງບອກນຳເອື້ອຍວ່າ "ເອື້ອຍເອີຍ ເອົານ້ຳໝໍ້ໜຶ້ງມາເປົ່າໃຫ້ຂ້ອຍແດ່" ນາງກໍເອົານ້ຳໝໍ້ໜຶ້ງມາເປົ່າໃຫ້ ແລະເອີ້ນຫາໄທບ້ານມາຊ່ອຍປິ່ນປົວ ແຕ່ອາການເຈັບຂອງທ້າວພີມມະດີໜັກຂຶ້ນຈຶ່ງໄດ້ຂາດໃຈຕາຍ. ນາງກໍຈັດແຈງເອົາຜ້າຂາວປູເອົາສົບດອຍໄວ້ແລະເຊີນໄທບ້ານມາ ຢູ່ເພື່ອນຊານຊາແມ່ກັບມາແຕ່ນາ. ສມັຍນັ້ນບໍ່ມີທ່ານໝໍຜູ້ຊຳນານເໝືອນດຽວນີ້ມີ

ແຕ່ພໍ່ຍາກາງບ້ານ ເພາະສະນັ້ນນາງພາວະດີ ຈຶ່ງຢູ່ໃນຖານະສຸດວິສັຍທີ່ຈະເອົາຊີວິດນ້ອງຊາຍໄວ້ໄດ້.

ມື້ນຶ່ງອີກ ໄທບ້ານປ່າວກັນໄປເອົາຟືນມາທານວັດ ນາງພາວະດີ ແລະ ທ້າວສຸວັນ ຜູ້ເປັນອ້າຍກໍໄປ ເມື່ອໄປຮອດປ່າບ່ອນຕັດຟືນ ບໍ່ເຫິງນານປານໃດ ກໍເກີດຟ້າລົມຝົນຕົກຂຶ້ນ ຄາວນຶ່ງກໍເກີດຟ້າຜ່າລົງ. ທ້າວສວັນແລະນາງພາວະດີກໍລົ້ມລົງ ເພາະຖືກສາຍຟ້າ ນ້ອງສາວລົ້ມເຕັ໊ງອ້າຍຢູ່ ທ້າວສວັນເຖິງແກ່ຄວາມຕາຍ ແຕ່ນາງພາວະດີຍັງຫັນໃຈຢູ່. ພວກໝູ່ທີ່ໄປນຳກັນຈຶ່ງຈັດການຫາມເອົາສົບ ພ້ອມດ້ວຍຜູ້ເຈັບກັບມາສູ່ບ້ານຍາແມ່ປະທຸມາ ຈັດການເຜົາສົບແລະປິ່ນປົວນາງພາວະດີຈົນຟື້ນຕົວມີຊີວິດຄືນມາ. ນາງລອດຕາຍເທື່ອນີ້ເປັນຄັ້ງທີ່ນຶ່ງ.

× ×

×

## ຍາແມ່ປະທຸມາເອົາຜົວໃໝ່

ຫ້າປີຕໍ່ມາ ຍາແມ່ປະທຸມາ ມີຄວາມລຳບາກໃນການຫາລ້ຽງລູກຫຼາຍຄົນ ຍາແມ່ຈຶ່ງທຳການສົມຣົດກັບສາມີຜູ້ໃໝ່ ຊຶ່ງເປັນພໍ່ໝ້າຍ ແລະມີລູກສາວຜູ້ນຶ່ງຊື່ວ່ານາງອ່ອນ. ນາງອ່ອນມີອາຍຸແກ່ກວ່ານາງພາວະດີ. ຕໍ່ມາ ຍາແມ່ປະທຸມາຈຶ່ງເກີດບຸດກັບພໍ່ໃໝ່ຜູ້ນຶ່ງຊື່ວ່າທ້າວຈຸມ.

ລູກເລັ້ຽງແລະລູກຜົວມັກອິດສາກັນເປັນທັມມະດາ. ນາງອ່ອນເປັນ

ຄົນຂີ້ຄ້ານມັກງ່າຍ ມີນິດສັຍກົງກັນຂ້າມກັບນາງພາວະດີ. ພໍ່ໃຫຍ່ເຫັນວ່ານາງພາວະດີ ເປັນຄົນຂຍັນໝັ່ນພຽນ ຈຶ່ງຮັກນາງຫຼາຍກວ່າລູກຄີງຂອງຕົນ. ດັ່ງນັ້ນນາງອ່ອນຈຶ່ງອິດສານາງພາວະດີ. ໃນລະຍະເວລາດຽວກັບນາງພາວະດີຕຳລົບໄດ້ສິບພືນ ນາງອ່ອນກໍຕຳໄດ້ແຕ່ພືນດຽວ. ສະນັ້ນເອື້ອຍຈຶ່ງມີຄວາມຄຽດແຄ້ນຫາເລື່ອງໃສ່ນ້ອງເພື່ອໃຫ້ພໍ່ຊັງນ້ອງແຕ່ເຖິງດັ່ງນັ້ນກໍດີນາງພາວະດີກໍເອົາໃຈດີສູ້,ທຳກິຣິຍາອ່ອນຫວານກັບເອື້ອຍສເມີແລະຮັກແພງທ້າວຈຸມ ຜູ້ເປັນນ້ອງເໝືອນກັນກັບລູກພໍ່ດຽວແມ່ດຽວກັນ. ນາງພາວະດີບໍ່ມີຄວາມອິດສາອິສຍາຜູ້ໃດ, ນັບຖືພໍ່ນ້າຄືພໍ່ບັງເກີດເກົ້າແລະຮັກລູກພໍ່ໃຫຍ່ເໝືອນກັນກັບເອື້ອຍຄີງນ້ອງຄີງ .

× ×

×

## ນາງພາວະດີມີຄູ່ຄອງ

ເມື່ອນາງພາວະດີ ຍັງນ້ອຍຢູ່ນັ້ນ ນາງໄດ້ໄປບີບແລະຢຽບໃຫ້ຜູ້ເຖົ້າຜູ້ແກ່ໂດຍບໍ່ຮຽກເອົາຄ່າຈ້າງຮາງວັນແຕ່ຢ່າງໃດເລີຍ ເພິ່ນຈຶ່ງໃຫ້ພອນແກ່ນາງວ່າ: "ອີຫຼ້າເອີຍ ໃຫ້ເຈົ້າໄດ້ຜົວຜູ້ຮູ້ໄດ້ຊູ້ຜູ້ດີແນ່ເນີ." ນາງພາວະດີ ກໍຍໍມືໄຫວ້ ແລະເວົ້າວ່າ: " ຂໍໃຫ້ໄດ້ດັ່ງຄວາມພອນຂອງຍາແມ່ເຖົ້າຂ້ານ້ອຍທ້ອນ."

ເມື່ອນາງພາວະດີອາຍຸໄດ້ ໑໘ ປີ ນາງກໍໄດ້ສົມຣົດກັບຊາຍຜູ້ຮູ້

ທີ່ເປັນນັກປຣາດອາຈານສົມຄວາມປາຖນາຂອງແມ່ເຖົ້າແມ່ນາຍ ທີ່ໄດ້ໃຫ້ພອນແກ່ນາງຍາມເມື່ອນາງຍັງນ້ອຍນັ້ນ. ຄູ່ຄອງຂອງນາງຊື່ວ່າທ້າວສົມໃຈ. ນາງພຍາຍາມປົວລະບັດຂັດສີຜູ້ເປັນສາມີ, ຖືວ່າສາມີເປັນຜູ້ທີ່ຄອບໂຄຣົບຍຳແຍງ, ນາງຮູ້ຽກບ້ານການເຮືອນ,ຮູ້ລະບຽບວິນັຍບໍ່ນ້ອຍໜ້າກວ່າຍິງອື່ນໆຜູ້ທີ່ໄດ້ຮັບການສຶກສາຊັ້ນສູງນັ້ນເລີຍ. ນາງບໍ່ຮູ້ໜັງສື ແຕ່ນາງຄິດເລກໂດຍບໍ່ໃຊ້ກະດາດດິນສໍຮອດຈຳນວນເງິນໝື່ນ, ແສນ, ລ້ານໄດ້ຢ່າງໜ້າອັສຈັນ. ສິ່ງຂອງທີ່ໄດ້ຊື້ມາລາຄາທໍ່ໃດ ນາງກໍຈື່ຈຳໄດ້ຢູ່ໂດຍບໍ່ຫຼົງລືມເລີຍ.

× ×

×

## ນາງພາວະດີເປັນແມ່ເຮືອນທີ່ດີ

ນາງພາວະດີເປັນແມ່ເຮືອນທີ່ດີເລີດ. ເມື່ອເຂົ້າບ່ອນນອນກໍເຂົ້ານອນລຸນຜົວ ເຖິງວ່າທ້າວສົມໃຈເຮັດວຽກຈົນເດິກກໍຕາມນາງກໍອົດນອນຄອຍຖ້າຈົນເພິ່ນເຮັດວຽກສຳເຣັດ ເວັ້ນໄວ້ແຕ່ມື້ໃດເພິ່ນຫາກອະນຸຍາດໃຫ້ໄປນອນກ່ອນ. ເມື່ອເຂົ້ານອນ ນາງກໍຫງັບໝອນຕົນລົງຕ່ຳກວ່າໝອນຜົວແລະນອນເບື້ອງຊ້າຍຜົວສເມີ.

ຕື່ນເຊົ້າມາ ນາງກໍພຍາຍາມລຸກກ່ອນສາມີ ເພື່ອທຳຄວາມສະອາດຢ້າວເຮືອນ, ຈັດແຈງເຄື່ອງລ້າງໜ້າລ້າງຕາ ແລະກາເຟນ້ຳຮ້ອນນ້ຳຊາໄວ້ຢ່າງຮຽບຮ້ອຍ.

ເຄື່ອງນຸ່ງຫົ່ມຂອງນາງພາວະດີກໍສ້ຽນໄວ້ເປັນບ່ອນເປັນທີ່ ເຄື່ອງນຸ່ງຢູ່ເຮືອນເອົາໄວ້ບ່ອນນຶ່ງ ເຄື່ອງນຸ່ງໄປຕລາດ, ອອກໄປທ່ຽວໃນເມືອງເອົາໄວ້ບ່ອນນຶ່ງອີກ ເຄື່ອງນຸ່ງສຳລັບເອົາໄປບຸນໄປທານກໍເອົາໄວ້ບ່ອນນຶ່ງຕ່າງຫາກ ເມື່ອຕ້ອງການໃຊ້ກໍຫາໄດ້ງ່າຍບໍ່ເສັຽເວລາຊອກຫາ.

ການແຕ່ງຕົວຂອງນາງກໍເປັນທັມມະດາ ແລະສະອາດຮຽບຮ້ອຍດີ ນາງບໍ່ຊອກຫາແບບແປກປລາດທີ່ຄົນອື່ນບໍ່ມີ ນຸ່ງສິ້ນກໍບໍ່ໂຈ້ນເກີນໄປ ບໍ່ລ້ານເກີນໄປ ເອົາແຕ່ພໍດີພໍງາມ. ເຂົ້າແປ້ງນ້ຳແດງນາງກໍໃຊ້ເປັນບາງຄັ້ງບາງຄາວ ແຕ່ບໍ່ທາເຂົ້າແປ້ງຈົນຂາວໂພກໂລກ, ບໍ່ໃສ່ນ້ຳແດງຈົນເປັນເກີນ ເພາະນາງຄິດວ່າ ຂອງເຫຼົ່ານີ້ພຽງແຕ່ເປັນສິ່ງຫຼອກລວງຕາ ຜິດທັມມະຊາດ ນາງສແວງຫາສິ່ງທີ່ຈິງງາມແຕ່ບໍ່ຝືນທັມມະຊາດເກີນຄວນ.

ເມື່ອທ້າວສິນໃຈ ກັບຈາກໂຮງການມາ ກໍເຫັນໄດ້ວ່າເຂົ້າປາອາຫານກໍຖືກຈັດພ້ອມແລ້ວ ເຄື່ອງຢ້າວຂອງເຮືອນກໍຢູ່ເປັນບ່ອນເປັນທີ່ ບໍ່ມີອັນໃດຊະຊາຍເລີຍ ຂອງອັນໃດເຄີຍຢູ່ບ່ອນໃດກໍຢູ່ບ່ອນນັ້ນສເມີ ທີ່ຫ້ອງຮັບແຂກກໍມີດອກໄມ້ໃສ່ແຈກັນໄວ້ ບ່ອນຢູ່ບ່ອນນອນກໍແປງໄວ້ຢ່າງຮຽບຮ້ອຍ ບ່ອນໃດກໍສະອາດງາມຕາຢູ່ທຸກບ່ອນ.

ນາງພາວະດີ ໄປຕລາດເອງ ຄົວຢູ່ຄົວກິນເອງ ຊັກຮີດເຄື່ອງນຸ່ງດ້ວຍຕົນເອງ ຫາເອົາຄົນໃຊ້ຈຳເພາະແຕ່ເມື່ອຕ້ອງການຖູພື້ນ

ເຮືອນເທື່ອໃດເປັນເວລາປະມານນຶ່ງຊົ່ວໂມງ . ເມື່ອເວລາເສັດສງຽບຮ້ອຍແລ້ວກໍເອົາຄ່າຈ້າງຮາງວັນໃຫ້ ຄົນໃຊ້ເທື່ອລະສີ່ຮ້ອຍຫ້າຮ້ອຍກີບ ແລ້ວກໍບອກໃຫ້ໜີໂລດ ທັງນີ້ກໍເພື່ອບໍ່ໃຫ້ມີຄົນກອນໃຈ ເມື່ອນາງຫາເດັກນ້ອຍລູກແຂກບ້ານໃກ້ເຮືອນຄຽງໄປຊື້ຂອງທີ່ຮ້ານນໍ່ ໆນັ້ນມາໃຫ້ ນາງກໍເອົາເງິນໃຫ້ເຂົາເທື່ອລະຊາວສາມສິບກີບ. ເມື່ອສອດຍາມບຸນແຂກມາ ເດັກນ້ອຍລູກແຂກກໍເຕົ້າໂຮມກັນມາຂໍເງິນນຳນາງ ໆ ກໍເອົາເງິນແຈກຢາຍທຸກໆຄົນຜູ້ລະສິບລະຊາວກີບ ເພາະສະນັ້ນເດັກນ້ອຍເຫຼົ່ານັ້ນຈຶ່ງຮັກຫອມນາງ ແລະເອີ້ນນາງວ່າ : "ຄຸນຍາຍ, ຄຸນຍາຍ."

ມື້ນຶ່ງທ້າວສົມໃຈຖາມເມັຽວ່າ : "ເປັນຫຍັງນ້ອງຈຶ່ງບໍ່ເອົາຄົນໃຊ້ມາຢູ່ນຳຈັກຄົນ? ເງິນເດືອນເຮົາກໍເຫຼືອໃຊ້ເຫຼືອຈ່າຍແລ້ວເນ.

"ນາງພາວະດີກໍຕອບວ່າ :" ເອົາຄົນໃຊ້ມາຫຍຸ້ງໃຈເຮັດຫຍັງ? ເຮົາເກີດມາມີມືມີຕີນເພື່ອເຮັດວຽກ ບໍ່ແມ່ນເພື່ອນອນກິນ ຜູ້ອື່ນເຮັດບໍ່ຖືກໃຈ ບໍ່ທໍ່ເຮົາເຮັດເອງ. ທຸກຕີນທຸກມືຢູ່ໄດ້ທຸກໃຈຢູ່ຍາກ" .

ຕັ້ງແຕ່ເອົາກັນມາ ນາງພາວະດີ ບໍ່ເຄີຍເວົ້າຂ້ອຍເວົ້າເຈົ້ານຳຜົວຈັກເທື່ອ ມີແຕ່ໂດຍຂ້ານ້ອຍຊູ່ແກ້ນປາກ. ມີແຕ່ໜ້າຊື່ນຕາບານຕໍ່ຜົວ ບໍ່ເຄີຍເວົ້າຮັດຄໍ ຂືນໃຈຜົວອັນອາດຈະເກີດວິວາດຜິດຖຽງກັນຂື້ນໄດ້. ເຖິງວ່ານາງພາວະດີອາຍຸອ່ອນກວ່າສາມີແຕ່ປີດຽວກໍດີ ນາງກໍເອີ້ນສາມີວ່າ " ປາປາ " ຫຼືເອີ້ນນຳຫຼານວ່າ " ຄຸນຕາ"

ເພື່ອຖ່ອມຕົວລົງ ເໝືອນກັນກັບລູກຫຼານ ທີ່ຕ້ອງຢູ່ໃນຄວາມປົກຄອງ , ໃນໂອກາດສັ່ງສອນຂອງພໍ່ແມ່ລຸງຕາ .

ເມື່ອຜົວແຕ່ງຕົວເສັດແລ້ວ ທ້າງຈະລົງເຮືອນໄປເຮັດການນາງກໍຄືນເບິ່ງເສື້ອຂອງຜົວ. ຖ້າຮູ້ສຶກວ່າເໝັນສາບພິສັກແລ້ວ ກໍຈໍາແກ້ເສື້ອທັນທີເພື່ອຈະເອົາໄປຊັກ.

× ×

×

ການຮັບຕ້ອນ

ເມື່ອສາມີບໍ່ຢູ່ ນາງພາວະດີ ກໍຕ້ອນຮັບແຂກຄົນທີ່ມາຢ້ຽມຢາມຕາງທ້າວສົມໃຈ ນາງເຮັດໜ້າຍິ້ມແຍ້ມແຈ່ມໃສປາກນ່ອນຫົວຫວານຜູ້ໃດໄດ້ເຂົ້າຫາສົນທະນາກັບນາງແລ້ວ ກໍນິຍົມຊົມຊອບນິດສັຍໃຈຄໍຂອງນາງເປັນອັນມາກ .

ຫຼານຂອງສາມີ ຫຼືລູກສິດເກົ່າຂອງສາມີທີ່ມາຢ້ຽມຢາມນັ້ນ ນາງພາວະດີກໍຂານ "ຂ້ານ້ອຍ". ເມື່ອທ້າວສົມໃຈໄດ້ຍິນກໍຖາມພະຣິຍາວ່າ: "ເປັນຫຍັງເຈົ້າຈຶ່ງເວົ້າ "ຂ້ານ້ອຍ" ນໍາຫຼານແລະລູກສິດເກົ່າຂອງຂ້ອຍ? "ນາງພາວະດີກໍຕອບວ່າ:" ເຂົາເຈົ້າມີຄວາມຮູ້ເປັນເຈົ້າເປັນນາຍແລ້ວ ຂານ " ຂ້ານ້ອຍ " ເຂົາເຈົ້າກໍຈະເສັຽປຽບເສັຽຍົດຫຍັງເດ? ສົ້ນວ່າຍໄປທາງໃດກໍໄດ້."

× × ×

## ນາງພາວະດີໄດ້ຮັບການສຶກສາພຽງເລັກນ້ອຍ

ທ້າວສົມໃຈຢາກຈະໃຫ້ນາງພາວະດີ ພະລິຍາທີ່ຮັກຂອງຕົນຮູ້ອ່ານ ຮູ້ຂຽນພາສາລາວແລະພາສາຝຣັ່ງເສດ ຈຶ່ງໄດ້ສົ່ງນາງໄປຮຽນທີ່ໂຮງຮຽນປະຖົມສຶກສາຫຼວງພຣະບາງ. ນາງແກ່ຄົງແລ້ວ ການຮ່ຳຮຽນກໍລຳບາກ ບໍ່ສູ້ຈົດຈຳໄດ້ງ່າຍເໝືອນເດັກນ້ອຍ. ເຖິງດັ່ງນັ້ນກໍດີ ນາງກໍຮູ້ອ່ານໜັງສືລາວໄດ້ຢ່າງງູໆ ປາໆ.

ນາງເຂົ້າໂຮງຮຽນບໍ່ພໍຫ້າເດືອນກໍລາອອກ ເພາະວ່ານາງເປັນຫ່ວງນຳວຽກບ້ານການເຮືອນ.

× ×

×

24/VII

## ການສະມາຄົມກັບພໍ່ແມ່ຜົວແລະຍາດພີ່ນ້ອງຂອງຜົວ

ນາງພາວະດີສະແດງຄວາມໂຄລົບຍຳແຍງຕໍ່ພໍ່ຜົວແມ່ຜົວຕລອດທັງຍາດພີ່ນ້ອງຝ່າຍຜົວ, ຕິດຕໍ່ສະມາຄົມກັບພວກເພິ່ນເໝືອນກັນກັບພໍ່ແມ່ຂອງຕົນເອງແລະຍາດພີ່ນ້ອງຂອງຕົນເອງ. ນາງມີຄວາມເອື້ອເຟື້ອເຜື່ອແຜ່ຕໍ່ພວກເພິ່ນໃນເມື່ອເພິ່ນຕ້ອງການຄວາມຊ່ວຍເຫຼືອ. ນາງຄິດເຫັນໃຈພວກເພິ່ນໂດຍໄປຢື້ຢາມຖາມຂ່າວພ້ອມທັງຂອງຕ້ອນຂອງຮັບ, ບໍ່ເວົ້າແລະບໍ່ກະທຳສິ່ງໃດທີ່ອາດເພາໃຫ້ພວກເພິ່ນເສັຽໃຈ.

× ×

×

## ການຄົບຫາສະມາຄົມກັບບຸກຄົນທົ່ວໄປ

ນາງພາວະດີ ບໍ່ພຽງແຕ່ຄົບຫາສະມາຄົມກັບຍາດພີ່ນ້ອງຂອງສາມີທີ່ນັ້ນ ແຕ່ນາງຍັງຄົບຫາສະມາຄົມກັບບຸກຄົນທຸກຊັ້ນທຸກວັຍອີກດ້ວຍ ສະເພາະຢ່າງຍິ່ງ ບຸກຄົນຜູ້ທີ່ຕົກທຸກໄດ້ຍາກຫາເຂົ້າກິນຄ່ຳ ນາງມີຄວາມເມດຕາກະຣຸນາ ໂດຍໃຫ້ທານດ້ວຍເຕັມອົກເຕັມໃຈ. ເມື່ອມີຄົນມາເວົ້ານຳນາງວ່າ "ໃຫ້ທານແກ່ຜູ້ທຸກຍາກບໍ່ໄດ້ບຸນ, ໃຫ້ທານແກ່ຜູ້ມີສິນຈຶ່ງໄດ້ບຸນ" ດັ່ງນີ້ ນາງກໍຮູ້ສຶກເສັຽໃຈແລະຕອບວ່າ : "ໃຫ້ທານແກ່ຄົນແຄ່ງຫັກຕາບອດ, ແກ່ຄົນທີ່ບໍ່ມີອັນຢູ່ອັນກິນ ນັ້ນແຫຼະໄດ້ບຸນຫຼາຍ ຍິ່ງກວ່າໃຫ້ທານແກ່ຜູ້ມີສິນເພາະເຂົາເຈົ້າອຶດຢາກ, ເຮົາຊ່ອຍໃຫ້ເຂົາເຈົ້າປະທັງຊີວິດຢູ່ໄດ້ຕໍ່ໄປ. ການກິນທານທາງພຣະພຸທສາສນານັ້ນກໍເປັນການດີຢູ່ຮ້ອຍບໍ່ປະຕິເສດ ແຕ່ຄວາມເມດຕາຈິດຕ້ອງແຜ່ໄປເຖິງບຸກຄົນທົ່ວໄປບໍ່ເລືອກໜ້າ."

ນາງພາວະດີມີຫ້ອງແຖວໃຫ້ຄົນເຊົ່າ ແຕ່ນາງເອົາຄ່າເຊົ່າຖືກາງພຽງແຕ່ເຄິ່ງຄ່າຫຼືນ້ອຍກວ່າເຄິ່ງຄ່າເຊົ່າທີ່ເຈົ້າຂອງບ້ານຜູ້ອື່ນຮຽກເອົານຳຜູ້ເຊົ່າ. ເຈົ້າຂອງບ້ານຜູ້ອື່ນຂຶ້ນຄ່າເຊົ່າຢູ່ທຸກປີ ແຕ່ນາງພາວະດີນັ້ນບໍ່ຂຶ້ນຈັກເທື່ອ. ຖ້າຫາກວ່າຜູ້ມາຂໍເຊົ່າເປັນຄົນແຕກເສິກແຕກເສືອມາແຕ່ໄກແລ້ວ ນາງກໍບໍ່ເອົາຄ່າເຊົ່ານຳຈັກອັດ. ຖ້າມີຄົນມາແຕ່ບ້ານແຫ່ງກຳເນີດຂອງນາງມາຢ້ຽມຖາມຂ່າວ ນາງກໍຍິນດີຕ້ອນຮັບຢ່າງອົບອຸ່ນຈະເປັນຍາດພີ່ນ້ອງຫຼືຄົນອື່ນກໍຕາມ ນາງກໍ

ໃຫ້ທານຜູ້ລະສອງສາມພັນກີບ ແລະ ເສັງຄ່າໂດຍສານທັງຂານາຂາກັບໃຫ້ອີກດ້ວຍ.

× ×

×

## ນາງພາວະດີເປັນໂຣກເສັ້ນປະສາດ

ເຮົາຮູ້ແລ້ວວ່າ ນາງພາວະດີ ມີຄວາມເມດຕາຈິດຕໍ່ບຸກຄົນທຸກຊັ້ນທຸກວັຍ. ທ້າວສົມໃຈແລະນາງພາວະດີຄູ່ຜົວເມັຍບໍ່ມີລູກນຳກັນ ແຕ່ມີຫຼານຍິງຫຼານຊາຍນັບບໍ່ຖ້ວນ. ຫຼານບາງຄົນພັ້ນມາລົບກວນ ຂໍເບັ້ຍຂໍເງິນ, ສາຍສ້ອຍສາຍແຂນ ນາງພາວະດີກໍເອົາໃຫ້ຕາມຄວາມຕ້ອງການຂອງຜູ້ມາຂໍ ແຕ່ເມື່ອຖືກລົບກວນຢູ່ເລື້ອຍໆ ນາງພາວະດີກໍເກີດໂມໂຫຂື້ນ ແຕ່ຄວາມໂມໂຫໂຫໂສນີ້ ບໍ່ໄດ້ເກີດມາຈາກນິດສັຍໃຈຄໍຂອງນາງຕາມປົກຕິ. ການເປັນເຊັ່ນນີ້ກໍຍ້ອນວ່ານາງເປັນໂຣກເສັ້ນປະສາດ ເພ່ນອາການຂອງໂຣກກຳເລີບຂື້ນນັ້ນເອງ ທີ່ທຳໃຫ້ນາງຟັ້ງເຟືອງສະຕິໄປຊົ່ວຄາວ. ເປັນບາງຄັ້ງບາງຄາວທີ່ນາງເວົ້າຂັດໃຈສາມີ ທັງນີ້ກໍຍ້ອນວ່ານາງເປັນໂຣກເສັ້ນປະສາດທີ່ພາໃຫ້ເປັນບ້າປ່ວງໄປຫຼາຍເທື່ອຫຼາຍທີແລ້ວ, ແຕ່ທ້າວສົມໃຈບໍ່ຖືສາຫາຄວາມຕໍ່ຜູ້ມີພຍາດເບັ້ງປງເປັ້ນເລີຍ.

ນາງພາວະດີເກີດໂຣກເສັ້ນປະສາດດັ່ງກ່າວ ເນື່ອງມາຈາກຄວາມເສັ່ງໃຈຂອງນາງ: ເມື່ອສາມີພານາງມາວຽງຈັນນັ້ນນາງ

ໄດ້ຂ່າວວ່າພໍ່ປູ່ຂອງນາງໄດ້ຕາເມັງໄວ້ໃຫ້ລູກຊາຍ, ຄືທ້າວສິນໃຈ ນາງບໍ່ອອກປາກ ແຕ່ມີຄວາມອຸກອັ້ງຢູ່ໃນໃຈເພາະວ່າຢ້ານສາມີຢ່າຮ້າງຕົນໄປແຕ່ງດອງກັບຜູ້ອື່ນ. ເມື່ອຄູ່ຫົວເມັງເມືອຢາມແມ່ຍ່າ ທີ່ຫຼວງພຣະບາງ ນາງກໍໄດ້ຍິນຂ່າວວ່າແມ່ຍ່າໄດ້ຕາເມັງໄວ້ໃຫ້ທ້າວສິນໃຈຜູ້ນຶ່ງອີກ. ຄວາມອຸກອັ້ງຂອງນາງຈຶ່ງທະວີຂຶ້ນ ຈົນເກີດມີອາການວິກົນຈະຣິດ (ເສັຽຈິດ) ປົວເປັນເວລາຫຼາຍເດືອນຈຶ່ງຫາຍ. ເຖິງດັ່ງນັ້ນກໍດີ ສຸຂພາບຂອງນາງກໍບໍ່ປົກຕິຄືເກົ່າ ແຕ່ນາງກໍຢູ່ໃນສິນກິນໃນທັມເຮັດບຸນເຮັດທານຢູ່ຢ່າງບໍ່ລົດລະ ຄວາມເມດຕາກະຣຸນາຂອງນາງກໍຍັງມີຢູ່ຕໍ່ໄປສເມີ. ແມ່ປ້ານ້າສາວທີ່ມາຢ້ຽມຢາມນັ້ນມັກຈົ່ມທຸກຈົ່ມຍາກໃຫ້ຟັງ ນາງຜູ້ເປັນຫ່ວງກັບຜູ້ອື່ນຍິ່ງກວ່າກັບຕົນເອງນັ້ນຈຶ່ງທຸກໃຈນຳ ພຍາດຂອງນາງກໍກຳເລີບຂຶ້ນ ເພາະສະນັ້ນຜູ້ເປັນສາມີຈຶ່ງກັ້ນການບໍ່ໃຫ້ຄົນມາຣົບກວນນາງຫຼາຍ ທັງນີ້ກໍເພື່ອໃຫ້ນາງຢູ່ງຽບໆແປງຈິດແປງໃຈໃຫ້ດີ. ການປະຕິບັດເຊັ່ນນີ້ບໍ່ໝາຍຄວາມວ່າທ້າວສິນໃຈມີໃຈຄັບແຄບແລະກຽດຊັງສັງຄົມດອກ, ແຕ່ສໍ່ໃຫ້ເຫັນຄວາມຮັກອັນແທ້ຈິງຂອງເພິ່ນຕໍ່ພະຣິຍາຜູ້ມີພຍາດ.

ສິ່ງທີ່ກະທົບກະເທືອນເຖິງເສັ້ນປະສາດຂອງນາງພາວະດີ ກໍຄືພາຍຫຼັງທີ່ໄດ້ຮັບຂ່າວມໍຣະນະກັມຂອງພໍ່ນ້າ ແລະ ນາດາຜູ້ບັງເກີດເກົ້າຂອງນາງ, ໃນເມື່ອມີຜູ້ມາຈົ່ມທຸກຈົ່ມຍາກຕໍ່ນາງ, ມີຜູ້ມາຫຼອນປາກດັງໃສ່, ມີຜູ້ມາຢ້ຽມຢາມເວລາຮັບປະທານຫຼືເວລາພັກ

ຜ່ອນກາງເວັນ, ມີຜູ້ເຄາະປະຕູເຮືອນດັງໆ ແລະ ນ່ຳເອົາໂດຍຜູ້ເຄາະບໍ່ຄອຍຖ້າຮອດເຄິ່ງນາທີ. ນາງເຄີຍເວົ້າວ່າຜູ້ກະທຳເຊັ່ນນີ້ຕ້ອງການໃຫ້ນາງບິນໄປຄືນົກໄປໄຂປະຕູເອົາ, ຜູ້ເຄາະປະຕູບໍ່ຄິດເລີຍວ່ານາງອາດຕິດທຸຣະ, ກຳລັງອາບນ້ຳ, ນຸ່ງເຄື່ອງຫຼືກຳລັງໄປຖ່າຍອຸດຈາຣະ, ປັດສາວະ ( ໄປໜັກ, ໄປເບົາ ).

ສິ່ງທີ່ກະທົບກະເທືອນເຖິງເສັ້ນປະສາດຂອງນາງອີກກໍຄື ເມື່ອເຫັນພວກນັກຮຽນເອົາອິດຖີບ ອິດຈັກ ມາຕັນປະຕູເຮືອນໂດຍຜູ້ກະທຳເຊັ່ນນີ້ບໍ່ຄິດວ່າປະຕູໃຊ້ສຳລັບເຂົ້າອອກ. ນາງມີຄວາມຂືນໃຈໃນເມື່ອຜູ້ທີ່ໄດ້ຮ່ຳຮຽນແຜນທີ່ຈະສລາດອາດຮູ້ ເລີຍກະທຳສິ່ງທີ່ໂງ່ໂງ່ຈົນກາຍເປັນຜູ້ທີ່ບໍ່ເພິ່ງປາຖນາ. ເມື່ອນາງເຫັນເຊັ່ນນີ້ ນາງກໍອອກປາກວ່າ: " ຮຽນວິຊາຄວາມຮູ້ຕ້ອງເອົາມາໃຊ້ເປັນປໂຍດບໍ່ແມ່ນແຕ່ສແວງຫາຕຳແໜ່ງໜ້າທີ່ການທໍ່ນັ້ນ ຂອງເລັກໆນ້ອຍໆທີ່ຖືວ່າເປັນຄວາມສຸພາບນີ້ແຫຼະ ສຸພາບບຸຣຸດສັຕຣີລາວເຮົາຄວນຮູ້ໄວ້ເປັນປະຈຳແຕ່ລະຄົນ."

ມີສິ່ງນຶ່ງອີກທີ່ພາໃຫ້ນາງພາວະດີເຈັບແຄ້ນໝັ້ນໃຈ ຄືເມື່ອແມ່ເຖົ້າແມ່ນາຍເວົ້າວ່າ: "ຊາດນີ້ຊົ່ວ, ຊາດນັ້ນບໍ່ດີ, ຊາດນັ້ນເປັນໂຈນ, ມັກດືອະມັກກາອບ...." ຫຼືວ່າ: " ລູກຂ້ອຍໄປສຶກສາທີ່ປະເທດຝຣັ່ງ ເສດໄດ້ແຕ່ງດອງກັບຍິງຝຣັ່ງ, ບັກວອນເອີຍ! "ເມື່ອໄດ້ຍິນຄວາມເວົ້າບາດທູນາງເຊັ່ນນີ້ ນາງກໍອົດບໍ່ໄດ້ຈຶ່ງຕອບວ່າ: "

ຊາດຝຣັ່ງເສດແລະຊາດອື່ນໆບໍ່ແມ່ນຄົນຄືເຈົ້າບໍ່? ຊາດລາວກໍດີ, ຊາດອື່ນໆກໍດີ ມີຜູ້ດີແລະຜູ້ຊົ່ວ. **ເຈົ້າຈະເອົາ ເອົາທັງຊາດວ່າຊາດ** ຊົ່ວ ນັ້ນບໍ່ໄດ້ເປັນອັນຂາດ. ຄັນເຈົ້າວ່າ "ຊາດລາວຊົ່ວ" ເຈົ້າກໍເປັນຄົນຊົ່ວຄືກັນ ເພາະເຈົ້າແມ່ນລາວ........"

× ×

×

ໂຣກເສັ້ນ<u>ປະສາດພະອິກຳລັງ</u>ຂຶ້ນ<u>ຢ່າງຮ້າຍ</u>ແຮງ

ໂຣກເສັ້ນປະສາດຂອງນາງພາວະດີ ທີ່ໄດ້ລະງັບໄປຊົ່ວຄາວນັ້ນ ກໍກັບເກີດຄືນມາຢ່າງຮ້າຍແຮງ. ຍ້ອນວ່າເລືອດຂຶ້ນສມອງ ນາງຈຶ່ງລົ້ມເຈັບລົງ ມີອາການໝົກຈົນບໍ່ຮູ້ເນື້ອຄິງເປັນເວລາຫຼາຍວັນ. ເມື່ອຟື້ນຂຶ້ນມາພໍປາກໄດ້ ນາງກໍຖາມຫາສາມີທີ່ຮັກຂອງນາງ ເວລາສາມີຫຼັບເຂົ້ານີ່ໆນາງກໍດຶງເອົາມືເພິ່ນມາຈູບ ແລະສະແດງອາການຫ່ວງໃຍ ນໍາທຸກສິ່ງທຸກຢ່າງ, ຖາມຫາພີ່ນ້ອງແລະເພື່ອນບ້ານໃກ້ຄຽງທຸກຄົນ.

ນາງຢ້ານບໍ່ມີຜູ້ປົວລະບັດເຂີ. ເມື່ອກິນເຂົ້າໄດ້ແລ້ວ ຫຼານສາວຜູ້ເຝົ້າຢູ່ໂຮງໝໍມະໂຫສົດກໍເອົາເຂົ້າປຽກມາປ້ອນ, ເມື່ອຈະກິນເທື່ອໃດ ນາງກໍຖາມນໍາຫຼານສາວຢ່າງຄ່ອຍໆວ່າ: "ຄຸນຕາເຈົ້າຮັບປະທານແລ້ວບໍ່? ເຂົ້າປຽກເຂົາຍັງມີຫຼາຍບໍ່? ຕັກໃຫ້ພວກນາງພຍາບານກິນຜູ້ລະຖ້ວຍແດ່ເນີ. ມີຂອງແຊບປັນທ່ານໝໍຮັບປະທານແດ່. ເຊີນເນັ້ງເພິ່ນນໍາແດ່". ເຖິງວ່ານາງມີອາການເຈັບໜັກກໍດີກໍຍັງເປັນຫ່ວງນໍາຜູ້

ອື່ນສເມີ.

ໃນເວລານອນເຈັບຢູ່ນັ້ນ ຖ້າຢາກກິນໝາກໄມ້ຫຼືເຄື່ອງກະປ໋ອງ ນາງພາວະດີກໍບອກໄປຊື້ມາໃຫ້ທັງບອກລາຄາພ້ອມເຊັ່ນ" ຊື້ໝາກອະງຸ່ນມາໃຫ້ແດ່ລາຄາກິໂລລະ ໕໐໐ ກີບ, ໝາກກ້ຽງໃຫຍ່ກາເຫບ ໜ່ວຍລະ ໑໕໐ ກີບ, ໝາກລີ້ນຈີ່ ກະປ໋ອງລະ ໔໕໐ ກີບ" ດັ່ງນີ້ເປັນຕົ້ນ. ຂອງທີ່ເຄີຍຊື້ຢູ່ຕລາດລາຄາທີ່ໃດກໍ່ຈື່ຈໍາໄດ້ໝົດທຸກຢ່າງ.

× ×

×

ນາງພາວະດີ.ຍິງຕົວຢ່າງ.ອາດເປັນຍອດຍິງໄດ້

ທ້າວສົມໃຈແລະນາງພາວະດີ ຊຶ່ງເປັນສາມີພະຣິຍາຮ່ວມທຸກສຸກມາເປັນເວລາຫຼາຍສິບປີຈົນເຖິງວັຍຊະຣາທັງຄູ່ນີ້ນັບວ່າເປັນຜົວແກ້ວເມັຽທິບ, ບໍ່ມີຄວາມຜິດຂ້ອງຕ້ອງໝຽງກັນຈັກເທື່ອ ເວັ້ນເສັຽແຕ່ໃນເມື່ອນາງພາວະດີຫາກຖືກພຍາດເບົ້າບຽດອັນພາໃຫ້ຄວາມຄິດວິປຣິດ (ຜິດທາງ, ຜິດປົກກະຕິ) ໄປຊົ່ວຂນະ ເມື່ອຮູ້ສຶກຕົວຂຶ້ນມານາງກໍຂໍສົມມາຄະຣະວະສາມີຂໍເພິ່ນໃຫ້ອະໂຫສິກັນໃນທັນທີທັນໃດນັ້ນ.

ນາງເກີດໂມໂຫຂຶ້ນເປັນບາງຄັ້ງບາງຄາວ ກໍເພາະວ່າໂຣກເສັ້ນປະສາດນາງສິງສູ່ຢູ່ ເປັນທີ່ສຸດວິສັຍທີ່ຈະລະງັບໄວ້ໄດ້. ເພາະສະນັ້ນທ່ານຜູ້ອ່ານຄົງເຫັນວ່າຄວນໃຫ້ອະພັຍແກ່ນາງ.

ຖ້າຫາກວ່ານາງພາວະດີໄດ້ຮ່ຳຮຽນມີຄວາມຮູ້ພໍສົມຄວນ ແລະມີ

ສຸຂພາບສົມບູນ ບໍ່ມີພຍາດບາດເຍົາ ເຂົ້າຄອບງຳດັ່ງທີ່ນາງເຄີຍເປັນມາ ແລະ ເປັນຢູ່ທຸກວັນນີ້ ນາງກໍອາດຈະໄດ້ຊື່ວ່າ ເປັນຍອດຍິງລາວຜູ້ນຶ່ງ.

× ×

×

<u>ຂໍ້ຄວາມຕື່ມແຖມ</u>

ໃນການຮຽບຮຽງປວັດຂອງນາງພາວະດີນາແລ້ວນີ້ ຂ້າພະເຈົ້າໄດ້ລືມຂໍ້ຄວາມບາງຕອນທີ່ຄວນນຳມາເລົ່າສູ່ທ່ານຜູ້ອ່ານຟັງ ເພາະສະນັ້ນຂ້າພະເຈົ້າຂໍຕື່ມແຖມໃສ່ດັ່ງຕໍ່ໄປນີ້:

ເນື່ອງຈາກນາງພາວະດີມີໃຈເຫຼື້ອມໃສສັດທາທາງພຣະພຸທສາສນາຢ່າງແຮງກ້າມາແຕ່ນ້ອຍພຸ້ນ ນາງຈຶ່ງໄດ້ບວດເປັນນາງຂາວແຕ່ເວລາຍັງເປັນສາວຢູ່ ແຕ່ຫາກພຽງເວລາອາທິດດຽວທໍ່ນັ້ນກໍເລີຍສິກ ທັງນີ້ກໍເພາະວ່າມາເຮືອນເທື່ອໃດນ້ອງຊາຍກໍປອງແຕ່ຈະເອົາມືລູບຫົວ. ນ້ອງຊາຍເປັນເດັກນ້ອຍທີ່ບໍ່ຮູ້ດຽງສາ ບໍ່ເຄີຍເຫັນຫົວລົ້ນຈຶ່ງຢາກເອົາມືລູບຫົວລົ້ນຫຼິ້ນ. ນາງຮູ້ສຶກເສັຽດາຍທີ່ບໍ່ໄດ້ບວດເປັນເວລາເຫິງນານກວ່ານີ້. ເຖິງວ່ານາງນັບຖືພຣະພຸທສາສນາກໍດີ ນາງບໍ່ເຄີຍໝິ່ນປມາດສາສນາອື່ນໆຈັກເທື່ອເລີຍ. ນາງໄດ້ມີໂອກາດໄປທີ່ວັດບາດຫຼວງ ເພື່ອຮ່ວມພິທີແຕ່ງດອງຂອງຄູ່ສົມຣົດທີ່ຮູ້ຈັກກັນແລະນັບຖືສາສນາຄຣິດຕຽນ. ນາງເຄີຍໃຫ້ທານແກ່ຄຸນພໍ່

ບາດຫຼວງ ໃນພິທີທຳບຸນຂອງເພິ່ນ ແລະໃຫ້ທານແກ່ບຸກຄົນທີ່ນັບຖືສາສນາອື່ນໆ ເຊັ່ນສາສນາອິສລາມ ເປັນຕົ້ນ. ນາງມີຄວາມເສັງໃຈເປັນຢ່າງຍິ່ງ ໃນເມື່ອໄດ້ຍິນບຸກຄົນຜູ້ໃດອ້າງວ່າສາສນານີ້ດີ ຫຼືວ່າສາສນານັ້ນຊົ່ວ ໂດຍອ້າງເຫດຜົນປະກອບຢ່າງບໍ່ເປັນຕາຟັງ.

ນາງພາວະດີໄດ້ເກີດເປັນບ້າປ່ອງໜີຈາກບ້ານໄປຫຼາຍເທື່ອ ແຕ່ຫາກໄປນອນຢູ່ເຮືອນພີ່ນ້ອງຄືນນຶ່ງ ຫຼືສອງຄືນແລ້ວກໍມີຜູ້ພາມາສົ່ງທີ່ບ້ານ. ເທື່ອນຶ່ງນາງໄດ້ປ່ອງໜີໄປຈົນຮອດຈັງຫວັດອຸດອນ ( ປະເທດໄທ ). ສາມີບໍ່ໄດ້ຮັບຂ່າວຄາວວ່າໜີໄປທາງໃດຈຶ່ງໄດ້ແຈ້ງຕໍ່ກົມຕຳຣວດຂໍໃຫ້ສືບຫາຕົວ. ຕໍ່ມາສີ່ຫ້າວັນພີ່ນ້ອງທາງອຸດອນຈຶ່ງມາແຈ້ງໃຫ້ຊາບວ່ານາງພາວະດີ ໄດ້ໜີໄປຢູ່ເຮືອນຕົນໂດຍບໍ່ເອົາສິ່ງຂອງຢ່າງໃດໄປນຳມີແຕ່ເຄື່ອງນຸ່ງຄາຄີງ. ພີ່ນ້ອງຜູ້ນັ້ນຈຶ່ງບອກວ່າ "ດຽວນີ້ ຄົນຍາຍ ມີອາການບໍ່ປົກຕິ ຂ້ານ້ອຍຂໍປິ່ນປົວເພິ່ນໃຫ້ເພິ່ນຢູ່ງຽບໆຈັກສອງສາມອາທິດເສັງກ່ອນ ແລ້ວຂ້ານ້ອຍຈະເອົາເພິ່ນມາສົ່ງ". ເປັນແຕ່ບຸນທີ່ນາງຍັງຮູ້ສຶກຕົວມຸ່ງໜ້າເຂົ້າໄປຫາເຮືອນພີ່ນ້ອງ, ບໍ່ດັ່ງນັ້ນກໍອາດໄປໂດນນ້ຳຕາຍເສັງແລ້ວ.

ເທື່ອນຶ່ງອີກໃນງານບຸນນະມັສການພຣະທາດຫຼວງ ທ້າວສົມໃຈໄປຮ່ວມບຸນຈົນຄ່ຳມືດ ນາງມີຄວາມວິຕົກຈຶ່ງໄປຕາມຫາສາມີທີ່ທາດຫຼວງກໍເລີຍບໍ່ພົບ. ຄົນທີ່ມາຮ່ວມບຸນເປັນຈຳນວນຕັ້ງຫຼາຍແສນຄົນເຮັດຈັ່ງໃດຈຶ່ງຈະຊອກຫາສາມີໄດ້ເດ! ຍ້ອນຄວາມວິຕົກນີ້ເອງ

ນາງຈຶ່ງເກີດປ່ອງບ້າຂຶ້ນທັນທີ, ນາງຈຶ່ງໂດນເຮືອນຈົນສາຫັກ ເບື້ອງນຶ່ງ ນາງໄດ້ນອນຢູ່ໂຮງໝໍເປັນເວລາເດືອນນຶ່ງຈຶ່ງຍ່າງໄດ້ ແຕ່ທຸກວັນນີ້ກໍຍັງຍ່າງບີກກະເດັກຢູ່.

ພວກຂ້າຣາຊການນັກນາຫາທ້າວສົມໃຈຊ່ອຍແປໜັງສືຫຼືຂຽນບົດຄວາມໃສ່ໜັງສືພິມຢູ່ເລື້ອຍໆ. ນີ້ໃດມີຄົນມາຫາຫຼາຍ ທ້າວສົມໃຈກໍຈົ່ມວ່າ: "ມີແຕ່ຜູ້ມາກວນ ຈະເຮັດວຽກສ່ວນຕົວກໍບໍ່ໄດ້ເຮັດ!" ເມື່ອນາງພາວະດີ ໄດ້ຍິນສຽງຈົ່ມເຊັ່ນນີ້ກໍເວົ້າວ່າ: "ໂຊ! ໂຊ! ຢ່າຊູ່ຈົ່ມ! ຢາເຮືອນບັງໝາ ຢ່າຈາຄຳຕ່າງ, ປາປາເອີຍ.... ເກົ້າອີດເກົ້າ ເຢື້ອນຫາກາະໄດ້ທ່ອນຄຳ". ນາງຍ້ານເພີ່ນ ເທື່ອເພີ່ນຊັງ ນາງຈຶ່ງເວົ້າວ່າ: "ຖ້າມີຜູ້ຊັງ ເຮົາໆກໍຈະຢູ່ຍາກ.... ຄັບທີ່ຢູ່ໄດ້ຄັບໃຈຢູ່ຍາກ".

ນິດສັຍຢ່າງນຶ່ງທີ່ຕິດຕົວນາງພາວະດີນັ້ນກໍຄືເວລາໄປຕລາດ ຫຼືໄປທຸລະສ່ວນຕົວ ນາງບໍ່ຕ້ອງການຂີ່ຣົດຍົນເພາະນາງເຫັນວ່າ ພິລຶກໂພດ ນາງຊອບຂີ່ແຕ່ສາມລໍ້. ເມື່ອເວລາຂຶ້ນສາມລໍ້ແລ້ວນາງກໍບອກບ່ອນທີ່ນາງຈະໄປແລະເອົາເງິນຄ່າຈ້າງໃຫ້ພ້ອມເປັນການລ່ວງໜ້າສເມີ. ພວກຖີບສາມລໍ້ທີ່ຮູ້ຈັກນິດສັຍອັນດີງາມຂອງນາງ ເມື່ອເຫັນນາງກໍແລ່ນຟຸ້ນກັນມາຫາ ແລະເວົ້າວ່າ: "ຍາໝ່

ຈະໄປໃສ? ຂ້ານ້ອຍຈະພາໄປ."

ຍ້ອນນິໄສໃຈຄໍອັນດີງາມຂອງນາງນີ້ແຫຼະຄົນທັງຫຼາຍທີ່ຢູ່ໃນຄຸ້ມຂອງນາງກໍດີ ທີ່ຢູ່ໄກກໍດີ ເມື່ອເວລາຊາບຂ່າວວ່ານາງເຈັບປ່ວຍໜັກແລະເຂົ້ານອນທີ່ໂຮງໝໍນັ້ນກໍພາກັນຫຼັ່ງກັນໄປຢ້ຽມຢາມ ພ້ອມດ້ວຍໝາກອະງຸ່ນ, ມັງຄຸດ, ໝາກປອມ, ໝາກກ້ຽງ, ໝາກລິນຈີດ ແລະນ້ຳສົ້ມນ້ຳຫວານ ແລະ ພາກັນນົບໄຫວ້ຂໍໃຫ້ນາງຫູ້ດີເລີດຄືນນີ້ຫາຍປ່ວຍໄວໆແລະໝັ້ນຍືນຢູ່ນຳລູກນຳຫຼານຕໍ່ໄປ.

ທຸກວັນນີ້ນາງພາວະດີຍັງນອນເຈັບຢູ່ໂຮງໝໍມະໂຫສົດ. ລະຫວ່າງທີ່ນາງພາວະດີ ນອນເຈັບຢູ່ໂຮງໝໍນັ້ນ ທ້າວສົມໃຈກໍເອົາຄົນໃຊ້ມາ ເບິ່ງແຍງວຽກບ້ານການເຮືອນຊານຖ້າພະລິຍາຈະຫາຍປ່ວຍ ແຕ່ເພິ່ນສັງເກດເຫັນວ່າ ເຮືອນທີ່ເຄີຍຖືກມ້ຽນມັດຢ່າງເປັນລະບຽບຮຽບຮ້ອຍນັ້ນກໍຮົກເຮື້ອ ເຄື່ອງຂອງກໍຊະຊາຍຢ່າງຜິດປົກກະຕິຈົນທ້າວສົມໃຈອົດກັ້ນໄວ້ບໍ່ໄດ້ ຈຶ່ງໄດ້ຕ່າວ່າຕິຕຽນຖາມສັງສອນຍິງຜູ້ນີ້ທີ່ຂາດຄຸນສົມບັດຂອງແມ່ເຮືອນ.

ນາງພາວະດີທີ່ເຈັບໜັກບໍ່ຮູ້ເນື້ອຄີງ ເປັນເວລາຫຼາຍວັນນັ້ນນັບວ່າໄດ້ຕາຍຄືນເປັນເທື່ອທີ່ສອງ. ນາງນອນເຈັບຢູ່ໂຮງໝໍໄດ້ສອງເດືອນແລ້ວ ດຽວນີ້ກໍຍັງລຸກນັ່ງບໍ່ໄດ້ເທື່ອ. ເມື່ອສາມີມາຫາ ນາງກໍດຶງເສື້ອເພິ່ນມາດົມເບິ່ງຕາມທີ່ເຄີຍກະທຳມາແຕ່ກ່ອນ ແລ້ວກໍ

ບອກກັບນາງສາວຜູ້ເຝົ້າຕົນທີ່ໂຮງໝໍນັ້ນວ່າ : "ໄພຈິດເອີຍ, ແກ້ເສື້ອຄຸນຕາເຈົ້າໄປຊັກແດ່, ເໝັນສາບແລ້ວ". ຄວາມເປັນຫ່ວງນຳສາມີແລະນຳຜູ້ອື່ນທີ່ເປັນນິດສັຍປະຈຳຂອງນາງພາວະດີ ຍາມເມື່ອຍັງຢູ່ດີມີແຮງນັ້ນກໍຕິດຕາມນາງມາຈົນກະທັ້ງເວລາທີ່ມີອາການອ່ອນແອຈົນປາກບໍ່ອອກສຽງ. ເຖິງວ່ານາງຍັງລຸກບໍ່ໄດ້ເທື່ອກໍດີ ນາງກໍຍັງຄອງສາມີໃຫ້ອະນຸຍາດນຳທ່ານພິມາຢູ່ເຮືອນເພາະເປັນຫ່ວງນຳວຽກທີ່ເຄີຍເຮັດ ນາງຍັງຊວນສາມີພາໄປຮັບປະທານອາຫານຢູ່ຮ້ານ "ມິນເຕີນ" ທີ່ນຳພຸໂດຍບໍ່ຄຳນຶງເຖິງຄວາມເຈັບຂອງຕົນ; ນາງຄົງຄິດຢູ່ໃນໃຈວ່າຕົນບໍ່ເຈັບບໍ່ປ່ວຍຫຍັງເລີຍ, ມີກໍສະແດງໃຫ້ເຮົາເຫັນວ່ານາງເປັນຫ່ວງນຳຜູ້ອື່ນຍິ່ງກວ່າເປັນຫ່ວງນຳຕົວເອງດັ່ງຂ້າພະເຈົ້າໄດ້ກ່າວມາຫຼາຍເທື່ອແລ້ວ.

× ×

×

<u>ມ້ອນທ້າຍ</u>

ຄຸນສົມບັດຂອງນາງພາວະດີທີ່ກ່າວມານີ້ ຮວມໃຈຄວາມໄດ້ວ່ານາງເປັນຜູ້ມີກິຣິຍາຄ່ຽມຄົມ, ເປັນແມ່ເຮືອນທີ່ດີ, ຮູ້ຈັກມ້ຽນມັດໃຫ້ທຸກສິ່ງເປັນລະບຽບຮຽບຮ້ອຍດີ, ຮັກແລະນັບຖືສາມີຈົນຖືວ່າເພິ່ນເປັນບິດາ ແລະຍອມຢູ່ໃຕ້ບັງຄັບບັນຊາຂອງເພິ່ນ; ນາງບໍ່ເວົ້າແລະບໍ່ປະພຶດສິ່ງໃດທີ່ອາດເຜີດໃຈຜູ້ອື່ນ, ບໍ່ບຽດບຽນສິດຂອງ

ຜູ້ອື່ນແລະເພື່ອນບ້ານໃກ້ຄຽງ ເຊັ່ນບໍ່ປາກດັງພົ້ນຢ້າວພົ້ນເຮືອນແລະ ບໍ່ຕອກຕາປູໂປກໆເປກໆໃນຍາມຄ່ຳຄືນເປັນຕົ້ນ. ນາງເຄີຍເວົ້າຢູ່ສເມີວ່າ "ເສັຽເງິນຫາໄດ້ ເສັຽໃຈຫາຍາກ". ເຖິງວ່ານາງເປັນພະຣິຍາຂອງຜູ້ໃຫຍ່ໄມ້ສູງແລ້ວກໍດີ ນາງກໍຖ່ອມຕົວລົງ, ບໍ່ຖືຕົນຖືຕົວ ນາງຮັກພໍ່ແມ່ພີ່ນ້ອງຂອງສາມີເໝືອນກັນກັບພໍ່ແມ່ພີ່ນ້ອງຂອງຕົນເອງ, ສະແດງຄວາມໂຄຣົບນົບນ້ອມຕໍ່ບຸກຄົນທຸກຊັ້ນວັນນະ ບໍ່ວ່າຊົນຊາດໃດພາສາໃດສາສນາໃດ, ມີໃຈເມດຕາກະຣຸນາຕໍ່ເພື່ອນມະນຸດດ້ວຍກັນຊຶ່ງເຮົາຖືວ່າເປັນຜູ້ຢູ່ໃນສິນກິນໃນທັມ.....ສົມຄວນແລ້ວທີ່ຈະຍົກນາງຂຶ້ນເປັນຍອດຍິງລາວແລະເປັນແມ່ຍິງຕົວຢ່າງ ສຳລັບຊາວລາວທົ່ວໄປໃນຈຳພວກສາມັນຊົນ.

ອະນິດຈາ! ນາງພາວະດີເປັນຜູ້ເຄາະຮ້າຍ ເຈັບປ່ວຍຢູ່ຢ່າງໜັກ ສົງສານ, ໜ້າສົມເພດເວທນາ! ນາງໄດ້ຕາຍຄືນສອງເທື່ອແລ້ວ ແລະນາງຍັງເຈັບຢູ່ນາງຈະມີອາຍຸຍືນເປັນຄູ່ຊີວິດຂອງທ້າວສົມໃຈ ຕໍ່ໄປຕື່ມຈັກເດືອນ, ຈັກປີໜໍ?- ເຮົາບໍ່ອາດຮູ້ໄດ້, ສຸດແລ້ວແຕ່ກັມມັດຈຸຣາດຈະມາບໍາເຮົາໄປຍາມໃດ: ກັມມັດຈຸຣາດມາຮອດແລ້ວບະພ້າກໍບໍ່ຟັງ.

ວຽງຈັນ, ວັນທີ່ ໑໕ ຕຸລາ ໑໙໕໗

# ຊີວະປວັດ

## ຂອງທ່ານ ສົມຈິນ ງິນ,

## ກະວີ ແລະ ນັກປະພັນລາວ

- ອາຈານວິທຍາລັຍວຽງຈັນ ( ອາວຸໂສແຫ່ງຄນະອາຈານ )
- ປະທານຄນະກັມມະການວັນນະຄະດີລາວ
- ສະມາຊິກຕິດຕໍ່ກັບ ສະມາຄົມນັກປຮາດຝຣັ່ງເສດ ແຫ່ງພາກຕາວັນອອກໄກ
- ສະມາຊິກສະມາຄົມກະວີແລະສິລປິນ ແຫ່ງປະເທດຝຣັ່ງເສດ
- ຜູ້ຕາງໜ້າທົ່ວໄປຂອງສະມາຄົມກະວີ ແລະ ສິລປິນແຫ່ງປະເທດຝຣັ່ງເສດສຳລັບພາກຕາວັນອອກໄກ
- ສະມາຊິກແລະຜູ້ຕາງໜ້າສຳລັບປະເທດລາວ ຂອງຄນະກັມມະການລະຫວ່າງປະເທດແຫ່ງ " ສູນກາງພິສູດແລະແລກປ່ຽນລະຫວ່າງປະເທດ"
- ສະມາຊິກແລະຜູ້ຕາງໜ້າບັນດິດສະຖານລະຫວ່າງນານາຊາດ "ເລໂອນາເດີແວງຊີ" ແຫ່ງ ວິທຍາສາດ, ອັກສອນສາດ ແລະ ສິລປະກັມ ທີ່ກຸງໂຣມ ( ປະເທດອີຕາລີ )
- ຜູ້ຕາງໜ້ານະປະເທດລາວ ຂອງສະມາຄົມພັກພວກທີ່ໄດ້ຮັບຫຼຽນຄວາມຊອບຝຣັ່ງເສດ "ປານອະກາເດມິກ" ແຫ່ງສຶກສາທິການ.

× ×

×

ທ່ານສົມຈິນ ງິນ ເກີດວັນທີ່ ໗ ມິຖຸນາ ໑໘໙໒ ທີ່ນະຄອນຫຼວງພຣະບາງ ( ປະເທດລາວ ), ບຸດຂອງນາງເພັງ ອ່ອນສີ ( ເຖິງແກ່ກັມແລ້ວ ) ແລະທ່ານພຣັງຊົວງິນອະດີດສະມາຊິກຄນະສຳຣວດໂອກຸດປາວີ ( ເຖິງແກ່ກັມແລ້ວ ).

ມີພະຣິຍາຊຶ່ງບໍ່ໄດ້ບຸດນຳກັນ

ໄດ້ຮັບການສຶກສາ : ເປັນນັກຮຽນເກົ່າແຫ່ງວິທຍາລັຍ ຊາເຊີລູໂລບາ ທີ່ນະຄອນໄຊ່ງ່ອນ ( ປະເທດຫວຽດນາມ ) ແລະວິທຍາລັຍລາວົວຊີເອ ທີ່ກຸງປາຣີ ( ປະເທດຝຣັ່ງເສດ ), ໄດ້ເຂົ້າອົບຮົມຢູ່ທີ່ມະຫາວິທຍາລັຍ "ເອໂກນໂກໂລນີອານ" ( ດຽວນີ້ປ່ຽນຊື່ເປັນ "ສະຖາບັນສຶກສາຊັ້ນສູງພາກພື້ນທະເລ" ) ແຫ່ງກຸງປາຣີ ແຕ່ເດືອນ ມິຖຸນາ ໑໙໐໗ ເຖິງເດືອນ ກໍລະກະດາ ໑໙໐໙.

× ×

×

<u>ປະຈຳຣາຊການ</u>

ໄດ້ຕັ້ງຕົນປະຈຳການໃນກົມປະຖົມສຶກສາແຫ່ງປະເທດລາວເມື່ອວັນທີ່ ໒໐ ກັນຍາ ໑໙໐໙, ໄດ້ສອບແຂ່ງຂັນສຳເຣັດເຂົ້າຊັ້ນກອມມີຊັ້ນສູງ ປະຈຳໂຮງການຜູ້ສຳເຣັດຣາຊການແລະປະຈຳແຂວງປະເທດລາວ ເມື່ອວັນທີ່ ໙ ມິຖຸນາ ໑໙໑໘, ໄດ້ເລື່ອນຊັ້ນເປັນລຳດັບຈົນເຖິງ ຊັ້ນກອມມີປະຖະມະພົ້ນຊັ້ນ ຖານພິເສດ ເມື່ອວັນທີ່ ໑

ກໍຣະກະດາ ໑໙໔໑. ໄດ້ຖືກໂອນເຂົ້າໃນຣາຊການປົກຄອງອິນໂດຈີນ ມີຍົດເປັນຫົວໜ້າພແນກປົກຄອງຊັ້ນ ໑ ແຫ່ງອິນໂດຈີນນັບຕັ້ງແຕ່ວັນທີ່ ໑ ກໍຣະກະດາ ໑໙໔໗ ( ຖານພິເສດ ) ເປັນຕົ້ນໄປ. ໄດ້ຮັບເບັ້ຽບໍານານແຕ່ວັນທີ່ ໓ ສິງຫາ ໑໙໔໘ ເປັນຕົ້ນມາ.

× ×

×

## ຕໍາແໜ່ງຣາຊການເປັນລໍາດັບ

- ແຕ່ ໑໙໐໙ ຫາ ໑໙໒໗ : ໄດ້ເຂົ້າປະຈໍາການທີ່ໂຮງການຂ້າຫຼວງ ປະຈໍາແຂວງວຽງຈັນ, ປາກເຊ ແລະ ໂຮງການຜູ້ສໍາເຣັດຣາຊການປະເທດລາວ, ໄດ້ເປັນຄຣູສອນປະຈໍາຫ້ອງໃນໝວດໂຮງຮຽນຕົ້ນໂຟແຮງ ວຽງຈັນ ແລະໃນໝວດໂຮງຮຽນຫຼວງພຣະບາງ.
- ຫົວໜ້າໝວດໂຮງຮຽນຫຼວງພຣະບາງ ໃນປີ ໑໙໓ .
- ຖືກແຍກໄປປະຈໍາການທີ່ສະຖານກົງສຸນຝຣັ່ງເສດບະອຸບົນ (ປະເທດໄທ) ແຕ່ເດືອນກັນຍາ ໑໙໓ ຫາເດືອນ ທັນວາ ໑໙໕໔ .
- ຫົວໜ້າກອງເລຂາ , ຕໍ່ມາເປັນກອມມີແຊຣອງຝ່າຍຕໍາຣວດພິເສດ ປະຈໍາກົມຕະເວນສັນປະເທດລາວແຕ່ເດືອນມະກະຣາ ໑໙໕໕ ຫາເດືອນພຶສຈິກາ ໑໙໕໙ .
- ປະຈໍາການທີ່ວິທຍຸກະຈາຍສຽງໄຊງ່ອນ (ວຽດນາມ) ແລະເປັນຜູ້ແປຢູ່ໃນກົມກອງການກະຈາຍສຽງ ແລະໂຄສະນາການທາງວິທຍຸ

ກະຈາຍສຽງທີ່ໄຊງ່ອນ ແຕ່ເດືອນ ພຶສຈິກາ ໑໙໓໙ ຫາເດືອນກໍ
ຣະກະດາ ໑໙໔໑ .

- ຖືກແຍກໄປປະຈຳການ ທີ່ກອງປະຊຸມຄນະປັກປັນເຂດແດນ (ທີ່ໂຮງການຜູ້ສຳເຣັດຣາຊການບອງດບານໃຕ້) ແຕ່ເດືອນກໍຣະກະດາ ໑໙໔໑ ຫາເດືອນກັນຍາ ໑໙໔໔ .
- ຫົວໜ້າກອງເລຂາ ແລະບັນນາທິການໜັງສືພິມຕ່າງໆ ຂອງກົມຖແລງຂ່າວແລະໂຄສະນາການ ນະປະເທດລາວ ແຕ່ວັນທີ່ ໗ ກັນຍາ ໑໙໔໔ ຫາວັນທີ່ ໙ ມີນາ ໑໙໔໕ .
- ອະທິບໍດີກົມຕຳຣວດແຫ່ງຊາດ , ອະທິບໍດີກົມພາສີອາກອນແຕ່ເດືອນມີນາ ໑໙໔໕ ຫາເດືອນມີນາ ໑໙໔໖ .
- ຮອງອະທິບໍດີກົມຖແລງຂ່າວແຫ່ງປະເທດລາວ ແຕ່ເດືອນ ເມສາ ໑໙໔໖ ຫາເດືອນ ມະກະຣາ ໑໙໔໗ .
- ຜູ້ອຳນວຍການໂຮງພິມຣັຖບານ ແຕ່ວັນທີ່ ໑໕ ມະກະຣາ ໑໙໔໗ ຫາວັນທີ່ ໙ ມະກະຣາ ໑໙໔໘ .
- ວັນທີ່ ໔ ມິຖຸນາ ໑໙໔໗ ຖືກແຕ່ງຕັ້ງໃຫ້ເປັນອະທິບໍດີກົມຖແລງຂ່າວ ແລະໂຄສະນາການແຫ່ງຣາຊອານາຈັກລາວ ພ້ອມກັບຕຳແໜ່ງຜູ້ອຳນວຍການໂຮງພິມຣັຖບານຄວບກັນໄປ.
- ຖືກແຕ່ງຕັ້ງໃຫ້ສອນພາສາລາວ ຢູ່ທີ່ວິທຍາລັຍປາວີ (ເປັນໂມງເພີ້ມນອກຕຳແໜ່ງຂອງຕົນ ສັປດາລະ ໑໐ ຊົ່ວໂມງ) ແຕ່ວັນທີ່໑໙

ເມສາ ໑໙໔໘ ຈົນເຖິງວັນທີ່ ໓໐ ມິຖຸນາ ໑໙໕໐.

× ×

×

<u>ຮັບຣາຊການໃນຖານະທີ່ເປັນຂ້າຣາຊການເບັ້ຽບໍານານຖືກເກນ</u>.

- ອອກຮັບເບັ້ຽບໍານານຖານທຳຣາຊການນານ ນັບຕັ້ງແຕ່ວັນທີ່ ໑໗ ສິງຫາ ໑໙໔໘ ແລະ ໄດ້ຖືກເກນຄືນເຂົ້າຮັບຣາຊການໃນທັນທີທັນໃດນັ້ນ ເພື່ອດຳລົງຕຳແໜ່ງອະທິບໍດີກົມຖແລງຂ່າວ ແລະ ໂຄສະນາການແຫ່ງຊາດຕໍ່ໄປ.
- ຮັບພາຣະສອນທີ່ໂຮງຮຽນກົດໝາຍ ແລະ ການປົກຄອງລາວ ແຕ່ ໑໙໔໙ ຫາ ໑໙໕໖.
- ວັນທີ່ ໔ ມິຖຸນາ ໑໙໔໙: ຮັບຕຳແໜ່ງນາຍົກພຸທທະບັນດິດສະພາ ຄວບກັນໄປກັບຕຳແໜ່ງອະທິບໍດີກົມຖແລງຂ່າວ ແລະ ໂຄສະນາການແຫ່ງຊາດ.
- ອອກຈາກຣາຊການເມື່ອວັນທີ່ ໓໐ ມິຖຸນາ ໑໙໕໐.
- ຖືກຄັດເລືອກເປັນປະທານກັມມະການວັນນະຄະດີທຸກໆປີ ຕັ້ງແຕ່ ໑໙໕໔ ຈົນເຖິງທຸກວັນນີ້.
- ຄືນເຂົ້າຮັບຣາຊການເປັນອາຈານສອນຢູ່ທີ່ວິທຍາລັຍວຽງຈັນຕັ້ງແຕ່ວັນທີ່ ໑໕ ກັນຍາ ໑໙໕໐ ເປັນຕົ້ນມາຈົນເຖິງດຽວນີ້.
- ອາຈານມະຫາວິທຍາລັຍສີສວ່າງວົງ (ສະຖາບັນສຶກສາວິຊາຄຣູ)

ຕັ້ງແຕ່ເດືອນຕຸລາ ໑໙໕໔.

- ທ່ານສົມຈິນງິນມີພູມຮູ້ສູງທາງພາສາລາວແລະໄທ ( ສຶກສາດ້ວຍຕົນເອງຈົນຊຳນານທາງເຄົ້າມູນຂອງພາສາ ຄື ປາລີ ແລະ ສັນສະກິດ ) .

- ເປັນກັມມະການໃນຄນະແຕ່ງແບບຮຽນສຳລັບໂຮງຮຽນ ປະເທດລາວ ແຕ່ ໑໙໓໗ ຫາ ໑໙໑໙ .

- ເປັນຜູ້ແຕ່ງແບບຮຽນອ່ານແລະຂຽນພາສາລາວສະບັບແຣກສຳລັບໂຮງຮຽນປະເທດລາວອອກໃຊ້ໃນປີ ໑໙໓໗, ແຕ່ງປື້ມອ່ານຫຼິ້ນເປັນພາສາລາວທີ່ມີຊື່ວ່າ "ພຣະພຸທຮູບສັກສິດ", ແຕ່ງໄວຍາກອນລາວ, ເລື່ອງບຸນລາວຕ່າງໆ ຕາມປະເພນີ ແລະທາງພຸທສາສນາ (ເປັນພາສາຝຣັ່ງເສດ), ວັທນະທັມລາວ (ພາສາລາວແລະຝຣັ່ງເສດ), ແປວັນນະຄະດີເລື່ອງສັງສິນຊັຍ ແລະ ຈັນທະຄາດເປັນພາສາຝຣັ່ງເສດ ແລະແຕ່ງໜັງສືອື່ນໆອີກ.

- ເປັນຜູ້ອຳນວຍການໜັງສືພິມລາວ "ລາວອັສມີ" ແລະໜັງສືວັທນະທັມຝຣັ່ງ-ລາວ ຊື່ວ່າ "ກິນນະຣີ" (໑໙໔໕-໑໙໔໗), ໄດ້ຂຽນເລື່ອງຕ່າງໆໃນໜັງສືພິມຂອງກົມໂຄສະນາການຄື ນິຍາຍ ແລະ ບົດຄວາມເປັນພາສາລາວແລະຝຣັ່ງເສດ.

- ໄດ້ຈັດການແຜ່ຫຍາຍພາສາຝຣັ່ງເສດຢ່າງກວ້າງຂວາງໃນປະເທດໄທ ໂດຍໄດ້ຮັບພາຣະສອນພາສາຝຣັ່ງເສດໃຫ້ລາວໆໃນຄວາມອຸປຖັມ

ຂອງສະຖານກົງສຸນຝຣັ່ງເສດທີ່ຈັງຫວັດອຸບົນຣາຊທານີ ( ປະເທດໄທ ) ແຕ່ວັນທີ່ ໒໑ ກັນຍາ ໑໙໔໗ ຫາ ວັນທີ່ ໓໑ ທັນວາ ໑໙໓໒.

- ເປັນຜູ້ສມັກຂຽນເຣື່ອງລົງໃນໜັງສືພິມຝຣັ່ງເສດ"Indochine Sud-Est Asiatique "(ອິນໂດຈີນ ອາຊີອາຄະເນ) ແລະ " France-Asie " ( ຝຣັ່ງ-ອາຊີ ).

- ເປັນກະວີພາສາລາວ ແລະພາສາຝຣັ່ງເສດ. ບົດກອນເຣື່ອງ "ຕາເວັນຕົກໃນແມ່ນ້ຳຂອງ" ຂອງທ່ານໄດ້ຖືກລົງໃນປະມວນຄຳກອນທີ່ໄດ້ຮັບຮາງວັນໃນປີ ໑໙໔໗ ຈັດຂື້ນໂດຍສະມາຄົມ "ປານອະກາເດມີກ" ຝຣັ່ງເສດ.

- ໄດ້ຮັບປະກາສນີຍະບັດກຽດສູງຂອງສະມາຄົມກະວີແລະສິລປິນແຫ່ງປະເທດຝຣັ່ງເສດ ເປັນຮາງວັນຍ້ອນນ້ຳໃຈໃນການແຕ່ງປື້ມ "ດອກຈຳປາ" ( ກອນເປັນພາສາຝຣັ່ງເສດ ) ພິມຈຳໜ່າຍໃນປີ ໑໙໕໑ .

- ນອກຈາກການສອນໃນວິທຍາລັຍຢ່າງຂຍັນຂັນແຂງແລ້ວ ທ່ານສົມຈິນງົນຍັງເປັນຜູ້ອຳນວຍການກົມວັນນະຄະດີແຕ່ປີ ໑໙໕໔ ເປັນຕົ້ນມາຈົນກາລະບັດນີ້.

× ×

×

## ຫຼຽນອິສຣິຍະພອນ ທີ່ໄດ້ຮັບເປັນລຳດັບມາ

- ລ້ານຊ້າງຮົ່ມຂາວ ຊັ້ນປັນຈະມາພອນ ( ໑໐ - ໓ - ໑໙໑໙)
- ຫຼຽນສຶກສາທິການ ແຫ່ງສາທາຣະນະຣັຖຝຣັ່ງເສດ ( ໒ - ໒ ໒໒ )
- ມະນີສາຣະພອນ ແຫ່ງກັມພູຊາ ( ໒໒ - ໘ - ໒໒ )
- ຫຼຽນຄຳພຣະເຈົ້າສີສວັດແຫ່ງກັມພູຊາ ( ໒໒ - ໘ - ໒໒ )
- ຫຼຽນກຽດຕິຍົດເງິນຊັ້ນ ໒ ຂອງຝຣັ່ງເສດ ( ໑໐-໗- ໒໕ )
- ຫຼຽນຣາຊອານາຈັກກັມພູຊາ ຊັ້ນປັນຈະມາພອນ(໑໕-໔-໒໗ )
- ລ້ານຊ້າງຮົ່ມຂາວ ຊັ້ນຈະຕຸດຖາພອນ ( ໑ - ໗ - ໒໘ )
- ອອບພີ ຊີເອເດະກາເດມີຝຣັ່ງເສດ ( ໑໓ - ໒ - ໓໓ )
- ຫຼຽນຄຳກິມຄັນຊັ້ນ ໓ ແຫ່ງອານາມ ( ໒໒ - ໘ - ໓໓ )
- ໂສວັທຣາຂເມນ ຊັ້ນປັນຈະມາພອນ ( ໑ - ໑ - ໒໒ )
- ລ້ານຊ້າງຮົ່ມຂາວ ຊັ້ນຕະຕິຍາພອນ ( ໑໓ - ໑໒ - ໒໗ )
- ຫຼຽນກຽດຕິຍົດຄຳຊັ້ນ ໒ ແຫ່ງສາທາຣະນະຣັຖຝຣັ່ງເສດ (໑໑ ໔ - ໔໘ )
- ອອບພີ ຊີເອ ເດປານອະກາເດມີກຝຣັ່ງເສດ (໒໐-໑໒-໔໙)
- ຫຼຽນພຣະບໍຣົມຮູບຊຸບຄຳແຫ່ງຣາຊອານາຈັກລາວ (໑໒-໑-໕໑)
- ເຊືອວາລີເອເດີລາເລຊີອົງດອນເນີຝຣັ່ງເສດ ( ໒໓-໑໑-໕໑)
- ລ້ານຊ້າງຮົ່ມຂາວ ຊັ້ນະຕິຍາພອນ ( ໔ - ໔ - ໕໕ )

- ຫຼຽນສຶກສາທິການແຫ່ງຣາຊອານາຈັກລາວຊັ້ນ ປັນຈະມາ ພອນ

( ໑໐ - ໕ - ໕໓ )

- ຫຼຽນສຶກສາທິການແຫ່ງຣາຊອານາຈັກລາວຊັ້ນ ຈະຕຸດຖາ ພອນ

( ໑໑ - ໕ - ໗໔ )

- ຫຼຽນຄຳທີ່ຣະລຶກຂອງບັນດິດສະຖານລະຫວ່າງນານາຊາດ (໑໙໗໔)

× ×

×